# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກເພັດ

(ສະບັດທົດລອງ)



ຂຽນໂດຍ: ອ.ຈ ສະໄໝ

ຂໍ້ມູນຈາກ: ບ້ານ ປາກມີ້ ເມືອງ ຊະນະຄາມ ແຂວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກເຜັດ

ຮີບໂຮມ ແລະຈັດພິມໜ້າໂດຍ: ສິດອາພອນ ດວງປະສິດ

ຜູ້ຮຽບຮຽງ: ອ.ຈ. ໂພໄຊ ຈັນທະວົງສາ

ອ.ຈ. ລັ່ງ ແສງດາລາ

ເຈົ້າຂອງ: ຫ້ອງການສຶກສາເມືອງຊະນະຄາມ ແຂວງວຽງຈັນ

ຈັນ ແລະສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation

A world for Children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານ ແລະອາສາສະໝັກຊຶ່ງໄດ້ຮຽບຮຽງໃນເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາ ແລະສຶກສາເມືອງຊະນະຄາມ.

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດນຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ 1 ປໍ 2 ແລະບົດທີ່ຍາກກໍເອົາສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາບກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຈະໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ສາລະໜ້າຮູ້

ໝາກເຜັດແມ່ນອາຫານປະເພດໜຶ່ງຂອງຄົນລາວທີ່ໄດ້ກິນມາແຕ່ປູ່ຍ່າຕາຍາຍ ແລະໄດ້ມີການປູກໄວ້ແຄມບ້ານແຄມເຮືອນເພື່ອຍາມໃດຕ້ອງການແມ່ນໄປເດັດເອົາມາເລີຍ. ຕໍ່ມາເຫັນວ່າເກີດມີຄວາມຕ້ອງການຫຼາຍຂຶ້ນຈຶ່ງພາໃຫ້ມີການປູກໝາກເຜັດຂາຍມາເຖິງປັດຈຸບັນ.

## ຫຼັກການວິທະຍາສາດ

ການປູກໝາກເຜັດກໍເພື່ອປະຫຍັດລາຍຈ່າຍ ອີກຢ່າງໜຶ່ງຖ້າປູກຫຼາຍເຫຼືອກິນກໍສາມາດນຳເອົາໄປຂາຍເພື່ອເປັນລາຍໄດ້ເຂົ້າຄອບຄົວອີກດ້ວຍ.

<u>ວິທີຄັດເລືອກແນວພັນ</u>

- ເອົາໝາກເຜັດທີ່ສຸກ (ແດງ) ນຳໄປຕາກແດດໃຫ້ແຫ້ງດີແລ້ວແກະເອົາແຕ່ແກ່ນ



PDF created with pdfFactory Pro trial version www.pdffactory.com

- ການກຽມໜານສຳລັບກ້າແກ່ນ
    1. ຂຸດໜານຕືກັບໜານຜັກ
    2. ທຸບດິນໃຫ້ມຸ່ນ
    3. ແປງໜານໃຫ້ລະອຽດດີ





PDF created with pdfFactory Pro trial version www.pdffactory.com

- ວິທີກ້າແກ່ນ

1. ນຳເອົາແກ່ນໝາກເຜັດທີ່ກຽມໄວ້ຫວ່ານລົງໃສ່ໜານໃຫ້ທົ່ວ
2. ເອົາຂີ້ແກບປົກບໍ່ໃຫ້ເຫັນແກ່ນໝາກເຜັດ
3. ຫົດນ້ຳເຊົ້າ-ແລງ





PDF created with pdfFactory Pro trial version www.pdffactory.com

<u>ວິທີການປູກ</u>

ຫຼັງຈາກເບ້ຍໝາກເຜັດມີອາຍຸໄດ້ 1 ເດືອນຈຶ່ງຫຼັກໄປປູກ,ບ່ອນທີ່ຈະນຳເບ້ຍໝາກເຜັດໄປປູກຕ້ອງເສຍຫຍ້າອອກໃຫ້ໝົດຈົນແປນ ແລ້ວໃຊ້ສຽມສັກຂຸດປູກຫ່າງກັນປະມານ 40 ຊ.ມຕໍ່ຂຸມ ປູກໄປ ເລື້ອຍໆຈົນແລ້ວ.



ກາບ: ການປູກໝາກເຜັດ

ບ້ານປາກມີ້ ຂຶ້ນຊື່ລືຊາ
ມີພູຜາ ທົ່ງນາກວ້າງໃຫຍ່
ຢູ່ຕາມໄຮ່ ເພິ່ນປູກໝາກເຜັດ
ພ້ອມກັນເຮັດ ໃຫ້ເປັນປະຈຳ
ເພິ່ນຈຶ່ງນຳ ໄປເປັນສິນຄ້າ
ໃຫ້ສືບວ່າ ບ້ານນີ້ປູກຫຼາຍ
ເອົາໄປຂາຍ ເຂົ້າສູ່ຕະຫຼາດ
ບໍ່ໃຫ້ຂາດ ລາຍໄດ້ຊູ່ວັນ

PDF created with pdfFactory Pro trial version www.pdffactory.com

## ເຊີ້ງ: ການປູກໝາກເຜັດ

ເອີຍໝູ່ເອີຍໝູ່ ໝູ່ເຮົາທັງຫຼາຍ
ທັງຍິງທັງຊາຍ ມາພ້ອມກັນເຮັດ
ມາປູກໝາກເຜັດ ທັງໃຫຍ່ແລະນ້ອຍ
ບໍ່ໃຫ້ຕ່ຳຕ້ອຍ ນ້ອຍໜ້າບ້ານເຂົາ
ຢ່າໄດ້ມົວເມົາ ເຮັດວຽກນອກບ້ານ
ຖ້າເຮົາບໍ່ຄ້ານ ເງິນຄຳຫຼັ່ງມາ
ຢ່າໃຫ້ເວລາ ປະໄປເສຍເປົ່າ
ທັງຂ້ອຍແລະເຈົ້າ ເຮັດໄດ້ຊູ່ຄືນ

## ລຳ: ການປູກໝາກເຜັດ

ຟັງເດີເຈົ້າ ຄຸນພໍ່ທັງຫຼາຍ
ຂ້ອຍຊິບັນລະຍາຍ ເວົ້າເລື່ອງໝາກເຜັດ
ເປັນເຄື່ອງປຸງທີ່ເດັດ ໃຫ້ເຜັດໃຫ້ແຊບ
ຊ່ອຍຕຳແຫຼກໆ ໃສ່ລາບໃສ່ກ້ອຍ
ແລ້ວຊີມເບິ່ງຈັກໜ້ອຍ ວ່າແຊບອີ່ຫຼີ
ລອງເບິ່ງຕິ ພີ່ນ້ອງທັງຫຼາຍ
ທີ່ຂ້ອຍໄດ້ບັນຍາຍ ບໍ່ເຊື່ອລອງເບິ່ງ

PDF created with pdfFactory Pro trial version www.pdffactory.com

# ເພງ: ການປູກໝາກເຜັດ

| | |
|---|---|
| ໝາກເຜັດ | ໝາກເຜັດໝາກເຜັດ |
| ໝາກເຜັດ | ມັນເປັນສິນຄ້າ |
| ພວກເຮົາມາ | ປູກໃຫ້ຫຼາຍໆ |
| ເຫຼືອກິນ | ແລ້ວເອົາໄປຂາຍ |
| ໃຫ້ເປັນ | ລາຍຮັບຄອບຄົວ |

PDF created with pdfFactory Pro trial version www.pdffactory.com

# ຮູບແລະປະຫວັດຂອງຜູ້ຂຽນ



ຊື່: ອ.ຈ ສະໄໝ

ນາມສະກຸນ: ສາວະນິນ

ອາຍຸ: 41 ປີ

ອາຊີບ: ຄູສອນ

## ເຫດຜົນຂອງການຫົວຂໍ້ນີ້ປຶດນີ້

ການທີ່ຂຽນຫົວຂໍ້ນີ້ຂຶ້ນມາກໍຢາກໃຫ້ເດັກນ້ອຍຮູ້ຈັກການປູກໝາກເຜັດເພາະການປູກໝາກເຜັດສາມາດເຮັດໃຫ້ເຮົາປະຢັດລາຍຈ່າຍອີກທາງໜຶ່ງບາງຄັ້ງເມື່ອປູກເປັນຈຳນວນຫຼາຍເຮົາຍັງສາມາດນຳເອົາໄວ້ຂາຍໄດ້ອີກ.

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com